# ພາລະບົດບາດ

| | |
|---|---|
| **ຕຳແໜ່ງ** | ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ |
| **ຈຳນວນຕຳແໜ່ງ** | 34 |
| **ບ່ອນປະຈຳການ** | ຫ້ອງການກຸ່ມບ້ານເປົ້າໝາຍ ໂດຍມີການລົງຢ້ຽມຢາມບ້ານເປົ້າໝາຍເປັນປະຈຳ |
| **ຜູ້ຊີ້ນຳ** | ພະນັກງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່ ຂັ້ນເມືອງ |
| **ທີ່ປຶກສາດ້ານວິຊາການ** | ທີມງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່ ຂັ້ນສູນກາງ ແລະ ພະນັກງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່ ຂັ້ນເມືອງ |
| **ປະສານງານຢ່າງໃກ້ສິດກັບ** | ທີມງານໂຄງການ ປຊກ ປະຈຳເມືອງ ແລະ ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ |
| **ໄລຍະເວລາສັນຍາ** | ສັນຍາເປັນປີ, ຕໍ່ສັນຍາໄດ້ໃນຊ່ວງໄລຍະເວລາຂອງໂຄງການ, ຂຶ້ນກັບການທົບທວນຜົນງານປະຈຳປີ, ຄວາມຕ້ອງການຂອງໂຄງການ, ແລະ ງົບປະມານ |

## ກ. ສະພາບລວມກ່ຽວກັບໂຄງການ

ການປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ ຂອງ ສປປ ລາວ ແມ່ນປັດໃຈສຳຄັນເພື່ອກ້າວໄປສູ່ ການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ ໃນເຂດເນີນສູງຂອງ ສປປ ລາວ. ໃນຂະນະທີ່ ປະມານ 2/3 ຂອງປະຊາກອນຂອງປະເທດ ອາໄສຢູ່ໃນເຂດຊົນນະບົດ, ພວກເຂົາເຈົ້າ ກວມເອົາ 88% ຂອງຜູ້ທຸກຍາກ. ເກືອບທັງໝົດຂອງຜູ້ທຸກຍາກ ແມ່ນຄົວເຮືອນກະສິກຳ. ປະມານເຄິ່ງຫນຶ່ງຂອງຄົວເຮືອນກະສິກຳທີ່ທຸກຍາກ (ຫຼື 41% ຂອງຈຳນວນຜູ້ທຸກຍາກ) ດຳລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກ, ສ່ວນຫຼາຍແມ່ນຢູ່ໃນເຂດເນີນສູງ; ມີພຽງແຕ່ 64% ຂອງກຸ່ມນີ້ ອາໄສຢູ່ໃນບ້ານທີ່ມີເສັ້ນທາງເຂົ້າເຖິງໄດ້ທຸກສະພາບອາກາດ. ດ້ວຍເຫດດັ່ງນີ້, ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ເປັນໂຄງການພັດທະນາ ທີ່ນຳໃຊ້ຮູບແບບການພັດທະນາໂດຍຊຸມຊົນເປັນເຈົ້າ, ມີຈຸດປະສົງເພື່ອປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ແລະ ການບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍສຳລັບຊຸມຊົນທຸກຍາກໃນພື້ນທີ່ເປົ້າໝາຍໂຄງການ, ພ້ອມທັງຕອບສະໜອງທັນທີ ແລະ ມີປະສິດທິຜົນໃນກໍລະນີເກີດວິກິດການ ຫຼື ເຫດການສຸກເສີນ. ໂຄງການດັ່ງກ່າວ ໄດ້ວາງເປົ້າໝາຍໃສ່ຊຸມຊົນທີ່ດ້ອຍໂອກາດໃນ ສປປ ລາວ ໃນ 7 ແຂວງ ຄື: ຫົວພັນ, ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ສາລະວັນ, ສະຫວັນນະເຂດ ແລະ ເຊກອງ. ນອກຈາກນັ້ນ, ໂຄງການ ປຊກ ແມ່ນສ່ວນໜຶ່ງຂອງວິທີການຫຼາຍຂະແໜງການຮ່ວມກັນຈັດຕັ້ງປະຕິບັດເພື່ອແກ້ໄຂບັນຫາດ້ານໂພຊະນາການ ແນໃສ່ຫຼຸດຜ່ອນບັນຫາເດັກຂາດໂພຊະນາການ ໃຫ້ເຫຼືອ ພຽງ 25% ໃນປີ 2025.

ໂຄງການປະກອບມີ 5 ອົງປະກອບ ຄື:

**ອົງປະກອບ 1: ການພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ (27.6 ລ້ານໂດລາສະຫາລັດ).**

ອົງປະກອບນີ້ ສະໜັບສະໜູນ ກິດຈະກຳທີ່ຈັດຕັ້ງປະຕິບັດຢູ່ໃນລະດັບຊຸມຊົນທັງຫມົດຂອງບ້ານ. ບັນດາກິດຈະກຳຈະເສີມສ້າງຄວາມສາມາດຂອງຊຸມຊົນ ເພື່ອຈັດລຽງບູລິມະສິດຄວາມຕ້ອງການລະດັບບ້ານ ທີ່ທົນທານຕໍ່ສະພາບອາກາດ ແລະ ການລົງທຶນໃສ່ພື້ນຖານໂຄງລ່າງຂະໜາດນ້ອຍທີ່ກ່ຽວຂ້ອງ ແລະ ການດຳເນີນງານ ແລະ ການບຳລຸງຮັກສາ (O&M). ທັງໝົດນີ້ຈະເນັ້ນໃສ່ສິ່ງເສີມການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນ ໂດຍສະເພາະຄວາມຕ້ອງການຂອງແມ່ຍິງ, ທຸກກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ. ຈະໃຫ້ບູລິມະສິດແກ່ບັນດາຄວາມຕ້ອງການທີ່ຈະແກ້ໄຂອຸປະສັກຕໍ່ກັບຄວາມໝັ້ນຄົງດ້ານສະບຽງອາຫານ, ການປັບປຸງໂພຊະນາການ, ແລະ/ຫຼື ການສ້າງລາຍຮັບ ໂດຍການມີສ່ວຮ່ວມຂອງກຸ່ມເຫຼົ່ານັ້ນ. ການອອກແບບ, ການດຳເນີນງານ ແລະ ການບຳລຸງຮັກສາ ພື້ນຖານໂຄງລ່າງຂະໜາດນ້ອຍ ຈະລວມເອົາລັກສະນະທີ່ມີການປ່ອຍທາດກາກບອນຕ່ຳ, ທົນທານຕໍ່ສະພາບອາກາດ ເຊັ່ນ: ການປະຕິບັດງານ, ຄວາມທົນທານ, ແລະ ຄວາມປອດໄພ.

**ອົງປະກອບ 2: ການສ້າງຄວາມອາດສາມາດໃນວຽກງານປັບປຸງຊີວິດການເປັນຢູ່ (7.95 ລ້ານໂດລາສະຫາລັດ).**

ອົງປະກອບນີ້ ສະຫນັບສະຫນູນກິດຈະກໍາລະດັບກຸ່ມທີ່ສົ່ງເສີມການສ້າງລາຍຮັບ. ກຸ່ມຈະໄດ້ປັບຕົວເຂົ້າກັບສະພາບເສດຖະກິດ-ສັງຄົມ ແລະ ສະພາບອາກາດຂອງບ້ານ. ຢູ່ໃນບ້ານປະເພດ II ແລະ ປະເພດ III, ໂຄງການ ປຊກ ຈະສະໜັບສະໜູນກຸ່ມທ້ອນເງິນ ແລະ ສິນເຊື່ອ, ສ່ວນຫຼາຍແມ່ນແມ່ຍິງ, ການສ້າງຄວາມຮູ້ດ້ານການເງິນ, ແລະ ກິດຈະກໍາການສ້າງລາຍຮັບທີ່ມີຄວາມຫຼາກຫຼາຍ ທົນທານຕໍ່ສະພາບອາກາດ. ໃນບາງບ້ານປະເພດ III ທີ່ມີທ່າແຮງດ້ານການຕະຫຼາດ, ໂຄງການ ຈະສະໜັບສະໜູນ ແລະ ການສ້າງຄວາມອາດສາມາດຂອງກຸ່ມຜະລິດ ທີ່ມີຢູ່ແລ້ວ ແລະ ຜູ້ສະໜອງປັດໃຈການຜະລິດກະສິກໍາທີ່ທົນທານຕໍ່ສະພາບອາກາດ. ໃນບ້ານປະເພດ I ທີ່ມີຄວາມສາມາດໃນການພັດທະນາວຽກງານທ້ອນເງິນ ແລະ ສິນເຊື່ອ ຈໍາກັດ ຍ້ອນສະມາຊິກໃນກຸ່ມສ່ວນໃຫຍ່ ທັງຍິງ ແລະ ຊາຍ ມີສະພາບຄວາມທຸກຍາກກວ່າ, ກຸ່ມເຫຼົ່ານີ້ ຈະເນັ້ນໃສ່ການຜະລິດສະບຽງອາຫານໃຫ້ພຽງພໍໃນການບໍລິໂພກ ແລະ ການສ້າງລາຍຮັບ.

**ອົງປະກອບ 3: ການສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ (4.75 ລ້ານໂດລາສະຫາລັດ).**

ອົງປະກອບນີ້ ສະຫນັບສະຫນູນການປັບປຸງການບໍລິໂພກອາຫານ (ທັງດ້ານຄຸນນະພາບ ແລະ ປະລິມານ) ຂອງແມ່ ແລະ ເດັກ ອາຍຸ 1.000 ວັນທໍາອິດ ໂດຍການສົ່ງເສີມການປະຕິບັດດ້ານໂພຊະນາການທີ່ດີ. ອົງປະກອບນີ້ ແມ່ນອີງໃສ່ 5 ຫຼັກການ ຄື: (ກ) ການນໍາສະ ເໜີການບໍລິໂພກອາຫານທີ່ປຸງແຕ່ງພາຍໃນບ້ານທີ່ປະຫຍັດເວລາ, (ຂ) ການປະກອບສ່ວນຂອງຊຸມຊົນ, (ຄ) ການສ້າງແຮງຈູງໃຈອີງໃສ່ຜົນໄດ້ຮັບ ສໍາລັບຊາວບ້ານທີ່ຈັດຕັ້ງປະຕິບັດໄດ້ດີ, (ງ) ການເສີມສ້າງຄວາມເຂັ້ມແຂງຂອງໄວຫນຸ່ມ ແລະ ສື່ສັງຄົມ ແລະ ການເພີ່ມແຫຼ່ງອາຫານໃນຂັ້ນທ້ອງຖິ່ນໃຫ້ຫຼາຍຂຶ້ນ. ຄວາມທົນທານຂອງຊຸມຊົນ ຈະຖືກເສີມສ້າງ ໂດຍການປະສົມປະສານລະຫວ່າງ ອາຫານຈາກການຜະລິດຂອງຄົວເຮືອນ, ການຊື້ອາຫານ ແລະ ການເກັບອາຫານຈາກປ່າ. ແຫຼ່ງສະບຽງອາຫານ ຈະໄດ້ຮັບກາສົ່ງເສີມ, ເປັນຕົ້ນແມ່ນ ເຂດຜະລິດ ເຊັ່ນ: ສວນຄົວ, ຮົ້ວສວນ, ເຂດປູກເຂົ້າເນີນສູງ, ທົ່ງນາ, ປະເພດພືດແລະ ສູດອາຫານຕ່າງໆ, ຈະຖືກດັດປັບໃຫ້ແທດເໝາະກັບສະພາບນິເວດກະສິກໍາ ແລະ ວັດທະນະທໍາຂອງຊຸມຊົນ.

**ອົງປະກອບ 4: ວຽກງານຄຸ້ມຄອງບໍລິຫານ, ການສ້າງຄວາມເຂັ້ມແຂງ, ຕິດຕາມ ແລະ ປະເມີນຜົນ (4.7 ລ້ານໂດລາສະຫາລັດ).**

ອົງປະກອບນີ້ ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການດໍາເນີນງານ ສໍາລັບການຄຸ້ມຄອງໂຄງການໃນແຕ່ລະຈໍາວັນ ແລະ ລະບົບການຕິດຕາມ ແລະ ການປະເມີນຜົນ. ຊຶ່ງກວມເອົາການຈ້າງ, ການຝຶກອົບຮົມ, ແລະ ການໃຫ້ຄ່າຕອບແທນແກ່ພະນັກງານ ຢູ່ຂັ້ນສູນກາງ ແລະ ຂັ້ນເມືອງ ລວມທັງ ຄ່າໃຊ້ຈ່າຍຂອງຜູ້ອໍານວຍຄວາມສະດວກຂັ້ນບ້ານ; ອຸປະກອນທີ່ກ່ຽວຂ້ອງແລະ ຄ່າໃຊ້ຈ່າຍໃນການດໍາເນີນງານ; ແລະ ການບັນຊີ, ການຈັດຊື້ຈັດຈ້າງ, ການຄຸ້ມຄອງທາງດ້ານການເງິນ, ການຄວບຄຸມພາຍໃນ, ການກວດສອບ, ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຕິດຕາມ-ປະເມີນຜົນ, ແລະ ການສະຫນັບສະຫນູນດ້ານອື່ນໆ.

**ອົງປະກອບ 5: ນະໂຍບາຍການແກ້ໄຂໄພພິບັດສຸກເສີນ (0 ໂດລາສະຫາລັດ).**

ໃນເບື້ອງຕົ້ນ ອົງປະກອບນີ້ ຈະບໍ່ມີການຈັດສັນງົບປະມານໄວ້ລ່ວງໜ້າ ແຕ່ຈະມີການຈັດສັນງົບປະມານມາຈາກອົງປະກອບອື່ນ ເພື່ອຕອບສະໜອງຢ່າງຮີບດ່ວນກັບວິກິດການ ຫຼື ເຫດການສຸກເສີນ ທີ່ລັດຖະບານ ປະກາດເປັນໄພພິບັດລະດັບຊາດ ທີ່ອາດຈະເກີດຂຶ້ນ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ. ທັງສາມປະເພດບ້ານ ແມ່ນເງື່ອນໄຂເທົ່າທຽມກັນທີ່ຈະໄດ້ຮັບການສະໜັບສະໜຸນ ໃນເວລາເກີດເຫດການໄພພິບັດ. ກິດຈະກໍາຂອງອົງປະກອບນີ້ ຈະອີງໃສ່ຍຸດທະສາດການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ຂອງ ສປປ ລາວ.

## ຂ. ບົດບາດໂດຍລວມ

ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ມີໜ້າທີ່ຮັບຜິດຊອບຫຼັກໃນການໃຫ້ຄໍາແນະນໍາດ້ານວິຊາການ ແລະ ການສະ ໜັບສະໜູນໂດຍກົງໃຫ້ແກ່ການຈັດຕັ້ງຂັ້ນຊຸມຊົນ ເຊັ່ນ: ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ (ກຊກ) ຂອງບ້ານ, ກຸ່ມຜະລິດ ແລະ

ຄະນະກຳມະການຄຸ້ມຄອງ ກຊກ ຂັ້ນບ້ານ (ຄບກ) ເພື່ອເສີມສ້າງຂີດຄວາມສາມາດຂອງເຂົາເຈົ້າ ແລະ ກຳນົດການອອກແບບ ແລະ ການປະຕິບັດກິດຈະກຳສ້າງລາຍຮັບ ແລະ ກິດຈະກຳການປັບປຸງຊີວິດການເປັນຢູ່; ພ້ອມທັງຕິດຕາມຄວາມຄືບໜ້າ ການຈັດຕັ້ງປະຕິບັດກິດຈະກຳເຫຼົ່ານັ້ນ ເພື່ອໃຫ້ໄດ້ຕາມຈຸດປະສົງໂຄງການ ຢູ່ພາຍໃນບ້ານເປົ້າໝາຍ.

## ຄ. ໜ້າທີ່ ແລະ ຄວາມຮັບຜິດຊອບ

**ການຄຸ້ມຄອງ ແລະ ກວດກາ**

1. ສະໜັບສະໜູນຊຸມຊົນເປົ້າໝາຍ ເພື່ອດຳເນີນຂັ້ນຕອນທີ່ໄດ້ອະທິບາຍໄວ້ໃນຄູ່ມື ຂອງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ (ກຊກ), ກຸ່ມຜະລິດ ແລະ ແຜນພັດທະນາບ້ານ;
2. ສະໜັບສະໜູນຊາວບ້ານໃນການກຳນົດ, ຄັດເລືອກ ແລະ ສ້າງຄວາມອາດສາມາດຂອງຜູ້ອຳນວຍຄວາມສະດວກຂັ້ນບ້ານ ໃນການຈັດຕັ້ງປະຕິບັດກິດຈະກຳປັບປຸງຊີວິດການເປັນຢູ່, ໂພຊະນາການ ແລະ ພື້ນຖານໂຄງລ່າງ;
3. ເຂົ້າຮ່ວມຢ່າງຫ້າວຫັນໃນກອງປະຊຸມເນາະນຳໂຄງການ ປຊກ ແລະ ກອງປະຊຸມວາງແຜນ;
4. ຊ່ວຍຫົວໜ້າທີມເມືອງ ແລະ ພະນັກງານຂັ້ນເມືອງ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂະບວນການວາງແຜນພັດທະນາ ບ້ານ;
5. ສະໜັບສະໜູນກຸ່ມ ກຊກ ໃຫ້ມີສ່ວນຮ່ວມໃນການສົນທະນາ ກ່ອນການວາງແຜນພັດທະນາບ້ານ ກ່ຽວກັບຄວາມຕ້ອງການ ດ້ານໂພຊະນາການ ແລະ ກິດຈະກຳການສ້າງລາຍ ເພື່ອໃຫ້ໄດ້ຜົນປະໂຫຍດ ຈາກພື້ນຖານໂຄງລ່າງຂະໜາດນ້ອຍ; ຊ່ວຍເຫຼືອຊາວບ້ານ ລວມທັງແມ່ຍິງ ແລະ ເດັກນ້ອຍ ໃນການກຳນົດຄອບຄົວທຸກຍາກ ເພື່ອສ້າງຕັ້ງກຸ່ມ ກຊກ ຂອງຄົວເຮືອນທີ່ທຸກຍາກທີ່ສຸດ ແລະ ຄົວເຮືອນທີ່ທຸກຍາກ;
6. ສະໜັບສະໜູນການຈັດຕັ້ງປະຕິບັດ 18 ຂັ້ນຕອນຂອງກິດຈະກຳປັບປຸງຊີວິດການເປັນຢູ່, ອຳນວຍຄວາມສະດວກໃຫ້ແກ່ ຊຸມຊົນ ສ້າງຕັ້ງກຸ່ມ ກຊກ ແລະ ກຸ່ມການຜະລິດ, ຈັດກອງປະຊຸມເປັນປົກກະຕິ, ກະກຽມການດຳເນີນກອງປະຊຸມ, ກິດຈະກຳການຝາກເງິນ ແລະ ການເກັບສິນເຊື່ອ ແລະ ການໝູນວຽນ ຂອງກອງທຶນກຸ່ມ ກຊກ ເປັນປະຈຳ ແລະ ທັນເວລາ;
7. ຊ່ວຍເຫຼືອກຸ່ມ ກຊກ ໃນການຈັດຊື້ອຸປະກອນ ແລະ ປັດໃຈການຜະລິດ ສຳລັບກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ທຸລະກິດ;
8. ລາຍງານຄວາມສ່ຽງ, ບັນຫາ ແລະ ຂໍ້ສະເໜີ ທີ່ອາດຈະເກີດຂຶ້ນໂດຍ ສະມາຊິກ ກຊກ ແລະ ກຸ່ມຜະລິດ ໃຫ້ແກ່ພະນັກງານ ກະສິກຳ ແລະ ປັບປຸງຊີວິດການເປັນຢູ່ ຂັ້ນເມືອງ ແລະ ຫົວໜ້າທີມງານຂັ້ນເມືອງ ເພື່ອຂໍຄຳແນະນຳ ໃນໄລຍະການຈັດຕັ້ງ ປະຕິບັດໂຄງການ;
9. ສະໜັບສະໜູນ ຜູ້ອຳນວຍຄວາມສະດວກຂັ້ນບ້ານ, ສະມາຊິກ ຄບກ ແລະ ສະມາຊິກ ກຊກ ກ່ຽວກັບການຄຸ້ມຄອງການເງິນ, ແຜນທຸລະກິດ ແລະ ສະໜັບສະໜູນ ກຊກ ກ່ຽວກັບຂະບວນການສະໜອງເງິນຕົ້ນທຶນ/ກູ້ຢືມ ລວມທັງການຈັດຝຶກອົບຮົມໃຫ້ແກ່ ຄບກ; ການສ້າງແຜນການລົງທຶນຂອງຄອບຄົວ, ແຜນການລົງທຶນຍ່ອຍ; ສະຫນັບສະຫນູນການຄຸ້ມຄອງເງິນຕົ້ນທຶນ/ເງິນກູ້ຢືມ; ແລະ ຕິດຕາມການລົງບັນຊີ; ສ້າງຕັ້ງ ກຸ່ມຜະລິດ (ໂດຍໄດ້ຮັບການສະຫນັບສະຫນູນຈາກຜູ້ອຳນວຍຄວາມສະດວກຂັ້ນບ້ານ) ໃນບ້ານປະເພດ III, ຫນຶ່ງກຸ່ມຜະລິດຕໍ່ເມືອງ ໂດຍທີ່ກິດຈະກຳການຜະລິດຂະຫຍາຍໄປຫາບ້ານທີ່ໃກ້ຄຽງ;
10. ສະຫນັບສະຫນູນກຸ່ມຜະລິດ ໃນກິດຈະກຳທີ່ເຮັດຮ່ວມກັນ ລວມທັງກົນໄກການຄຸ້ມຄອງ ແລະ ການສະຫມັກຂໍກູ້ຢືມ / ການຄຸ້ມຄອງເງິນກູ້ຢືມ;
11. ພົບປະ ແລະ ສະໜັບສະໜູນ ຄບກ ແລະ ຜູ້ອຳນວຍຄວາມສະດວກຂັ້ນບ້ານ ເປັນປະຈຳ ເພື່ອຮວບຮວມບົດລາຍງານ, ປຶກສາຫາລືກ່ຽວກັບຄວາມຄືບໜ້າ ແລະ ບັນຫາຕ່າງໆ ແລະ ສະໜອງການຝຶກອົບຮົມກັບທີ່;
12. ສ້າງຂີດຄວາມອາດສາມາດໃຫ້ແກ່ກຸ່ມຊາວກະສິກອນຜູ້ປູກພືດ ໂດຍສະເພາະແມ່ນການຄຸ້ມຄອງກຸ່ມຊາວກະສິກອນທີ່ປູກພືດເສດຖະກິດ ແລະ ໄມ້ໃຫ້ໝາກ, ການຜະລິດກະສິກຳສະອາດ ລວມທັງການຮັບຮອງເອົາກະສິກຳທີ່ມີຄວາມທົນທານຕໍ່ກັບສະພາບດິນຟ້າອາກາດ (ລວມທັງການປູກພືດ, ການລ້ຽງສັດ, ການປະມົງ ແລະ ປ່າໄມ້), ລະບົບການຕິດຕາມ ແລະ ລາຍງານ ເພື່ອຮັບປະກັນໃຫ້ເຊື່ອມໂຍງກັບລະບົບຕະຫຼາດທີ່ມີຢູ່ຢ່າງມີປະສິດທິພາບ.

***ການສ້າງຄວາມເຂັ້ມແຂງ***

13. ຝຶກອົບຮົມ ແລະ ສະໜັບສະໜູນ ກຊກ ໃຫ້ຄວາມຮູ້ດ້ານການເງິນ ເຊັ່ນ: ການຄຸ້ມຄອງເງິນເງິນຝາກ ແລະ ສິນເຊື່ອ (ລວມທັງການລົງບັນຊີ);
14. ຊ່ວຍເຫຼືອໃນການຝຶກອົບຮົມ (ອີງຕາມ 5 ໂມດູນ ການຝຶກອົບຮົມ ກຊກ, 4 ໂມດູນ ການຝຶກອົບຮົມ ຄບກ, ແລະ 5 ໂມດູນ ການຝຶກອົບຮົມ ກຸ່ມຜະລິດ) ແລະ ການຝຶກອົບຮົມເຮັດວຽກຕົວຈິງ ໃຫ້ແກ່ ກຊກ, ຄບກ ແລະ ກຸ່ມຜະລິດ ກ່ຽວກັບຫົວຂໍ້ການປັບປຸງຊີວິດການເປັນຢູ່ທີ່ເໝາະສົມ ລວມທັງ ການຄຸ້ມຄອງກອງທຶນ/ເງິນກູ້, ການຝາກເງິນ, ການປ່ອຍສິນເຊື່ອໃຫ້ແກ່ສະມາຊິກ ກຊກ ໂດຍອີງໃສ່ແຜນການລົງທຶນຂອງຄອບຄົວ, ການກະກຽມໂຄງການຍ່ອຍພື້ນຖານໂຄງລ່າງ, ການປະຕິບັດກິດຈະກໍາການສ້າງລາຍຮັບ, ການເກັບສິນເຊື່ອຕາມກໍານົດເວລາ, ການຄິດໄລ່ຜົນປະໂຫຍດຈາກ ກິດຈະກໍາການສ້າງລາຍຮັບ ແລະ ການຕິດຕາມ ແລະ ລາຍງານກິດຈະກໍາ;
15. ສ້າງຂີດຄວາມສາມາດຂອງສະມາຊິກ ກຸ່ມຜະລິດ ໂດຍການຈັດຝຶກອົບຮົມ, ການສາທິດ ແລະ ການເຮັດຕົວຈິງ ກ່ຽວກັບການສ້າງແຜນທຸລະກິດ, ການດໍາເນີນການ/ການດໍາເນີນງານ, ແລະ ການຕະຫຼາດຂອງ ກຸ່ມຜະລິດເປັນສິນຄ້າ;
16. ຊ່ວຍຫົວໜ້າທີມງານຂັ້ນເມືອງ ໃນການຝຶກອົບຮົມ ແລະ ການຝຶກແອບເຮັດຕົວຈິງ ກ່ຽວກັບແຜນການຄຸ້ມຄອງສັດຕູພືດສໍາລັບ ກຊກ ແລະ ກຸ່ມຜະລິດ;
17. ຊ່ວຍເຫຼືອ ດ້ານວິຊາການ ແລະ ເຄືອຂ່າຍດ້ານການຕະຫຼາດ ໃຫ້ແກ່ກຸ່ມຊາວກະສິກອນການປູກພືດ ແລະ ຊຸມຊົນ ລວມທັງການຜະລິດກະສິກໍາ ແລະ ການລ້ຽງສັດ ທີ່ທົນທານກັບສະພາບອາກາດ, ການຜະລິດກະສິກໍາທີ່ດີ, ການແກ້ໄຂບັນຫາທີ່ເກີດຈາກທໍາມະຊາດ ແລະ ອື່ນໆ;
18. ກະກຽມການລົງຢ້ຽມຢາມ ແລະ ແລກປ່ຽນປະສົບການ ໃຫ້ແກ່ຊາວກະສິກອນຕົວແບບ.

***ການສື່ສານ ແລະ ການເຮັດວຽກເປັນທີມ***

19. ເຂົ້າຮ່ວມກອງປະຊຸມໂຄງການ ປຊກ ປະຈໍາເດືອນ ແລະ ກອງປະຊຸມ/ຝຶກອົບຮົມອື່ນໆ ຕາມການຮຽກຮ້ອງຂອງຫົວໜ້າທີມງານຂັ້ນເມືອງ;
20. ຊ່ວຍເຫຼືອ ກຊກ ແລະ ກຸ່ມຜະລິດ ໃນການເຂົ້າເຖິງການເງິນ ຈາກໂຄງການ ແລະ ສະຖາບັນການເງິນທ້ອງຖິ່ນ, ທະນາຄານ, ແລະ ອື່ນໆ;
21. ຊ່ວຍເຫຼືອ ກຊກ ແລະ ກຸ່ມຜະລິດ ເພື່ອສ້າງຜົນຜະລິດທີ່ພຽງພໍ ຈາກກິດຈະກໍາການສ້າງລາຍຮັບ ໂດຍເງິນຕົ້ນທຶນ ແລະ ສ້າງການເຊື່ອມໂຍງ ແລະ ການຮ່ວມມືໃນໄລຍະຍາວ ກັບຕະຫຼາດທີ່ມີທ່າແຮງ ແລະ ຜູ້ຊື້/ພາກເອກະຊົນ ໃນທ້ອງຖິ່ນເພື່ອຮັບປະກັນຕະຫຼາດ ສໍາລັບຜົນຜະລິດທີ່ຜະລິດໄດ້ຈາກກິດຈະກໍາປັບປຸງຊີວິດການເປັນຢູ່;
22. ຮ່ວມມືກັບພະນັກງານດ້ານໂພຊະນາການຂັ້ນບ້ານ ເພື່ອເຂົ້າຮ່ວມໃນການກະກຽມຂໍ້ມູນບ້ານ;
23. ສະໜັບສະໜູນຫົວໜ້າທີມງານຂັ້ນເມືອງ ໃນວຽກງານກໍ່ສ້າງພື້ນຖານໂຄງລ່າງ ທີ່ສະໜັບສະໜູນໂດຍໂຄງການ;
24. ເກັບກໍາການປະຕິບັດທີ່ດີທີ່ສຸດ, ກໍລະນີສຶກສາທີ່ປະສົບຜົນສໍາເລັດ, ຄອບຄົວຕົວແບບ / ຊາວກະສິກອນຈາກບັນດາຄອບຄົວ ກຊກ, ຄບກ, ແລະ ກຸ່ມຜະລິດ.

***ການຕິດຕາມ ການວິເຄາະ ແລະ ການລາຍງານ***

25. ລົງພື້ນທີ່ບ້ານເປົ້າໝາຍເປັນປະຈໍາ ເພື່ອຕິດຕາມ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດວຽກງານການປັບປຸງຊີວິດການເປັນຢູ່;
26. ປ້ອນຂໍ້ມູນທີ່ຕ້ອງການໃສ່ປຶ້ມ ແລະ ການບັນທຶກຂອງ ກຸ່ມຜະລິດ ແລະ ຄບກ, ໃສ່ເຄື່ອງມືຕິດຕາມ (Kobo Toolbox) ໃນເວລາທີ່ລົງໄປຢ້ຽມຢາມບ້ານຕ່າງໆ ແລະ ລາຍງານໃຫ້ ພະນັກງານກະສິກໍາ ແລະ ປັບປຸງຊີວິດການເປັນຢູ່ ຂັ້ນເມືອງ ເປັນປະຈໍາ;
27. ກວດກາຄຸນນະພາບການປ້ອນຂໍ້ມູນໃສ່ປຶ້ມ ແລະ ການບັນທຶກ ເປັນປະຈໍາ ແລະ ໃຫ້ຄໍາຄິດເຫັນ ລວມທັງຢູ່ໃນ Kobo Toolbox;
28. ເຂົ້າຮ່ວມເກັບກໍາຂໍ້ມູນ ຕິດຕາມ ແລະ ປະເມີນຜົນ ໃນຊ່ວງເວລາທີ່ກໍານົດ ແລະ ລາຍງານໃຫ້ຫົວໜ້າທີມງານຂັ້ນເມືອງ;

29. ກະກຽມ ແລະ ສົ່ງບົດລາຍງານຄວາມຄືບໜ້າ ປະຈຳເດືອນ ໃຫ້ຫົວໜ້າທີມງານຂັ້ນເມືອງ ແລະ ຫ້ອງການ ປຊກ ຂັ້ນສູນກາງ;
30. ຊ່ວຍພະນັກງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່ຂັ້ນເມືອງ ກວດກາຄືນການປະຕິບັດໜ້າທີ່ຂອງແຕ່ລະ ກຊກ, ກຸ່ມຜະລິດ ແລະ ກະກຽມແຜນການສ້າງຄວາມເຂັ້ມແຂງເພື່ອປັບປຸງການປະຕິບັດວຽກງານ;
31. ໃຊ້ແທັບເລັດເພື່ອປ້ອນຂໍ້ມູນເຂົ້າໃນລະບົບ MIS ເພື່ອໃຫ້ສາມາດຕິດຕາມກິດຈະກຳ ຂອງ ກຊກ, ກຸ່ມຜະລິດ ແລະ ກິດຈະກຳສ້າງລາຍຮັບ.

***ການຈັດຕັ້ງປະຕິບັດກອບວຽກງານສິ່ງແວດລ້ອມ ແລະ ສັງຄົມ ກ່ຽວກັບວຽກງານການປັບປຸງຊີວິດການເປັນຢູ່***

32. ຊ່ວຍເຫຼືອ ແລະ ຮ່ວມມືກັບທີມງານສິ່ງແວດລ້ອມ ແລະ ສັງຄົມຂັ້ນເມືອງ ໃນການຕິດຕາມກວດກາ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ປະຕິບັດຕາມກອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMF) ເຊັ່ນ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ທີ່ກ່ຽວຂ້ອງກັບກິດຈະກຳການປັບປຸງຊີວິດການເປັນຢູ່ ໂດຍ ສຳມະຊິກ ກຊກ ແລະ ກຸ່ມຜະລິດ;
33. ລາຍງານກ່ຽວກັບຄວາມສ່ຽງ, ບັນຫາ ແລະ ຂໍ້ຂ້ອງໃຈທີ່ອາດຈະເກີດຂຶ້ນໂດຍ ສະມາຊິກ ກຊກ, ກຸ່ມຜະລິດ ໃຫ້ແກ່ຫົວໜ້າທີມງານເມືອງ ແລະ ພະນັກງານສິ່ງແວດລ້ອມ ແລະ ສັງຄົມ ຂັ້ນເມືອງ ເພື່ອຂໍຄຳແນະນຳໃນໄລຍະການຈັດຕັ້ງປະຕິບັດໂຄງການ.

***ການເຂົ້າຮ່ວມການຝຶກອົບຮົມ***

34. ເຂົ້າຮ່ວມການຝຶກອົບຮົມ: ເຂົ້າຮ່ວມຢ່າງຫ້າວຫັນໃນການຝຶກອົບຮົມທັງໝົດເພື່ອພັດທະນາທັກສະ ແລະ ຄວາມຮູ້ທີ່ກ່ຽວຂ້ອງ ເພື່ອການປະຕິບັດໜ້າທີ່ຂອງຕົນເອງໃຫ້ປະສິດທິພາບ.

***ວຽກງານທີ່ກ່ຽວຂ້ອງອື່ນໆ***

35. ປະຕິບັດວຽກງານອື່ນໆ ຕາມການຮຽກຮ້ອງຂອງຜູ້ຊີ້ນຳ ແລະ ທີ່ປຶກສາດ້ານວິຊາການ, ຕາມຄວາມຕ້ອງການຂອງໂຄງການ.

## ງ. ເງື່ອນໄຂຂອງຜູ້ສະໝັກ

- ຈົບຊັ້ນສູງຂຶ້ນໄປ ໃນສາຂາວິຊາກະສິກຳ, ລ້ຽງສັດ, ປ່າໄມ້, ການພັດທະນາຊຸມຊົນ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
- ມີປະສົບການໃນວຽກງານການປັບປຸງຊີວິດການເປັນຢູ່, ກິດຈະກຳການສ້າງລາຍຮັບ, ການສ້າງ ແລະ ການຄຸ້ມຄອງກຸ່ມ;
- ມີທັກສະການສື່ສານທາງສັງຄົມທີ່ດີ ແລະ ມີປະສົບການເຮັດວຽກກັບອົງການປົກຄອງທ້ອງຖິ່ນ, ແມ່ຍິງ ແລະ ກຸ່ມຊົນເຜົ່າ;
- ມີທັກສະທາງດ້ານຄອມພິວເຕີດີ ມີຄວາມສາມາດນຳໃຊ້ Microsoft Office (Word, Excel);
- ສາມາດສື່ສານເປັນພາສາທ້ອງຖິ່ນໄດ້ ຈະພິຈາລະນາເປັນພິເສດ;
- ສາມາດເດີນທາງ ແລະ ພັກເຊົາຢູ່ບ້ານເປົ້າໝາຍໂຄງການໄດ້.